ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ                                                    ເລກທີ 138 /ນຍ/.96

# ດຳ ລັດ
## ວ່າດ້ວຍການປະຖົມສຶກສາ ແບບບັງຄັບ

ກະຊວງສຶກສາ
ຂາເຂົ້າ
ເລກທີ 748 ລົງວັນທີ 9/11/96

ອີງຕາມ ມາດຕາ 19 ຂອງ ລັດຖະທຳມະນູນ ແຫ່ງ ສ.ປ.ປ ລາວ
ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ " ວ່າດ້ວຍການຈັດຕັ້ງ ກະຊວງສຶກສາທິການ "
ສະບັບເລກທີ 61/ນຍ ລົງວັນທີ 10 ເມສາ 1993.
ອີງຕາມ ການສະເໜີ ຂອງລັດຖະມົນຕີ ວ່າການ ກະຊວງສຶກສາທິການ.

ນາຍົກລັດຖະມົນຕີ ອອກ ດຳ ລັດ :

### ໝວດທີ I
### ຫລັກ ການ ທົ່ວ ໄປ

ມາດຕາ 1: ການສຶກສາຂັ້ນປະຖົມ ແມ່ນຂັ້ນໜຶ່ງຂອງການສຶກສາ ສາມັນ, ມີກຳນົດໄລຍະຮຽນ 5 ປີ ແລະ ເປັນການສຶກສາຂັ້ນພື້ນຖານ ທີ່ຈຳເປັນ ຊຶ່ງພົນລະເມືອງລາວ ທຸກຄົນ ຕ້ອງໄດ້ຮຽນໃຫ້ຈົບຈົບຕາມຫລັກສູດ.

ມາດຕາ 2: ພົນລະເມືອງລາວ ທຸກຄົນ ໂດຍບໍ່ຈຳແນກເຊື້ອຊາດ, ສາສະໜາ, ເພດ, ຊົນເຜົ່າ, ຖານະທາງດ້ານ ເສດຖະກິດ ແລະ ສັງຄົມ, ທີ່ຕັ້ງພູມລຳເນົາ ຢູ່ໃນ ສ. ປ. ປ. ລາວ ແຕ່ອາຍຸ 6 ປີ ເຕັມຂຶ້ນໄປ ໃນເດືອນ 12 ( ທັນວາ ) ຂອງແຕ່ລະສົກຮຽນນັ້ນໆ, ຕ້ອງໄດ້ເຂົ້າຮັບການສຶກສາຂັ້ນປະຖົມ ໂດຍທົ່ວເຖິງ ແລະ ເທົ່າທຽມກັນ.

ມາດຕາ 3 : ນັກຮຽນທຸກຄົນ ທີ່ໄດ້ຈົດທະບຽນເຂົ້າຮຽນຕາມທີ່ໄດ້ບົ່ງໄວ້ໃນມາດຕາ 2 ເທິງນີ້, ຈະຕ້ອງຮຽນຈົບຫລັກສູດ. ຖ້າບໍ່ ດັ່ງນັ້ນ ຈະຕ້ອງໄດ້ສືບຕໍ່ຮຽນ, ບໍ່ໃຫ້ມີການອອກໂຮງຮຽນ ຫລື ປະລະການຮຽນ ຈົນຮອດ ອາຍຸໄດ້ 14 ປີ ເຕັມ, ຍົກເວັ້ນແຕ່ ຜູ້ທີ່ ມີສຸຂະພາບ ທາງ

ດ້ານຮ່າງກາຍ ແລະ ຈິດໃຈ ບໍ່ສົມບູນ ຊຶ່ງຢູ່ໃນຂັ້ນ ທີ່ວ່າ ບໍ່ສາມາດ ຮຽນໄດ້, ເຖິງວ່າ ຈະໄດ້ຮັບການເອົາໃຈໃສ່ໃຫ້ຮຽນແບບພິເສດ ແລ້ວກໍ່ຕາມ.

<u>ມາດຕາ 4</u> : ການບໍລິການການສຶກສານັ້ນ, ອາດຈະເປັນຮູບການຂອງລັດ ຫລື ເອກະຊົນກໍ່ໄດ້, ແຕ່ໃຫ້ຮັບປະກັນເນື້ອໃນເພື່ອແນໃສ່ ພັດທະນາເດັກ ທາງດ້ານຮ່າງກາຍ, ຈິດໃຈ ແລະ ຄວາມສາມາດ ຕາມທີ່ຫລັກສູດຂອງການສຶກສາຂັ້ນປະຖົມ ທີ່ກະຊວງສຶກສາທິການໄດ້ວາງໄວ້.

<u>ມາດຕາ 5</u>: ລັດຮ່ວມກັບ ປະຊາຊົນ ມີໜ້າທີ່ໃນການຄຸ້ມຄອງ ແລະ ບໍລິການ ການສຶກສາ ຢູ່ໂຮງຮຽນປະຖົມຂອງລັດ, ການບໍລິການ ຢູ່ໂຮງຮຽນ ດັ່ງກ່າວແມ່ນບໍ່ໄດ້ເສຍຄ່າ.

## ໝວດ ທີ II
## ພັນທະຂອງ ລັດ ແລະ ປະຊາຊົນ

<u>ມາດຕາ 6</u>: ອົງການຈັດຕັ້ງຂອງລັດ ແລະ ສັງຄົມ ທີ່ກ່ຽວຂ້ອງທຸກຂັ້ນ ຊຶ່ງເປັນຕົວແທນຂອງລັດ ມີພັນທະດັ່ງນີ້ :

- ປຸກລະດົມ ຊຸກຍູ້ ແລະ ອຳນວຍຄວາມສະດວກໃຫ້ແກ່ພົນລະເມືອງລາວທຸກຄົນໄດ້ຮັບ ການສຶກສາຂັ້ນປະຖົມ ຢ່າງທົ່ວເຖິງ.
- ຈັດຫາສະຖານທີ່ການສຶກສາ, ໂຮງຮຽນ ພ້ອມດ້ວຍອຸປະກອນ ການສຶກສາ ທີ່ຈຳເປັນຂັ້ນ ພື້ນຖານ ເພື່ອບໍລິການ ຮ່ວມກັບປະຊາຊົນທີ່ອາໄສຢູ່ທ້ອງຖິ່ນນັ້ນໆ.
- ຕອບສະໜອງ ຄູສອນ ໃຫ້ພຽງພໍກັບຄວາມຕ້ອງການ ແລະ ໃຫ້ຮັບປະກັນ ຄຸນນະພາບ.
- ຮັບປະກັນໃຫ້ໄລຍະເວລາທີ່ສະໜອງບໍລິການ ການສຶກສາໃຫ້ແກ່ເດັກນັ້ນ ສອດຄ່ອງ ເໝາະສົມກັບເງື່ອນໄຂດິນຟ້າອາກາດ ແລະ ການທຳມາຫາກິນຂອງປະຊາຊົນ ໃນທ້ອງຖິ່ນນັ້ນໆ ເປັນຢ່າງດີ ເພື່ອຮັບປະກັນການມາໂຮງຮຽນຂອງເດັກ ໃຫ້ສະໝ່ຳສະເໝີ ແລະ ຄົບຖ້ວນ ຕາມເວລາທີ່ໄດ້ກຳນົດໄວ້ໃນຫລັກສູດ.

<u>ມາດຕາ 7</u>: ກະຊວງການສຶກສາທິການມີໜ້າທີ່ດັ່ງນີ້ :

- ຈັດຫາ ແລະ ກໍ່ສ້າງໂຮງຮຽນ ສະຖານທີ່ການສຶກສາຮ່ວມກັບອຳນາດການປົກຄອງທ້ອງຖິ່ນ.
- ຊອກຫາ ແລະ ປະກອບອຸປະກອນ ການສຶກສາທີ່ຈຳເປັນ ຂັ້ນພື້ນຖານ ໃຫ້ແກ່ໂຮງຮຽນ ຮ່ວມກັບອຳນາດການປົກຄອງ ແລະ ປະຊາຊົນ ທ້ອງຖິ່ນນັ້ນໆ.
- ສະໜອງ ຄູສອນ ໃຫ້ພຽງພໍກັບຄວາມຕ້ອງການ ແລະ ທັງຮັບປະກັນຄຸນນະພາບ.
- ກຳນົດໄລຍະເວລາການສຶກສາ ແລະ ຕາລາສິດສອນໃຫ້ຖືກຕ້ອງເໝາະສົມ. /

- ເອົາໃຈໃສ່ເປັນພິເສດສຳລັບເຂດພູດອຍຫ່າງໄກສອກຫລີກ ເຂດຊົນເຜົ່າ ແລະ ປະຊາ ຊົນທຸກຍາກຂາດເຂີນ.

<u>ມາດຕາ 8</u>: ອຳນາດການປົກຄອງຂັ້ນແຂວງ, ກຳແພງນະຄອນ, ເມືອງ, ບ້ານ ແລະ ອົງການຈັດຕັ້ງມະຫາຊົນ ທ້ອງຖິ່ນ ມີໜ້າທີ່ ດັ່ງນີ້ :

- ປຸກລະດົມຂົນຂວາຍປະຊາຊົນ ໃຫ້ສົ່ງລູກຫລານ ເຂົ້າຮຽນ.
- ສຳຫລວດຂຶ້ນບັນຊີ ແລະ ເກັບກຳສະຖິຕິພົນລະເມືອງ ເພື່ອຮັບປະກັນໃຫ້ເດັກທີ່ຮອດກະສຽນອາຍຸ 6 ປີ ໃຫ້ໄດ້ເຂົ້າຮຽນຢ່າງທົ່ວເຖິງ.

<u>ມາດຕາ 9</u>: ອົງການຈັດຕັ້ງສັງຄົມ ພໍ່ແມ່ ຫລື ຜູ້ປົກຄອງເດັກ ມີໜ້າທີ່ດັ່ງນີ້ :

- ປະກອບສ່ວນສ້າງ ແລະ ພັດທະນາການສຶກສາ.
- ສົ່ງ ແລະ ອຳນວຍຄວາມສະດວກ ໃຫ້ລູກຫລານຂອງຕົນ ທີ່ມີອາຍຸເຂົ້າຮຽນໃຫ້ໄປຈົດທະບຽນເຂົ້າຮຽນ ຢູ່ ໂຮງຮຽນທີ່ຢູ່ໃກ້ບ້ານຂອງຕົນ.
- ປະກອບສ່ວນສ້າງ ອາຄານ, ຊ່ວຍອຸປະກອນການສຶກສາ, ສ້າງສະຖານທີ່ຮ່ຳຮຽນໃນທ້ອງຖິ່ນ ຂອງຕົນ ຮ່ວມກັບລັດ.
- ປົກປັກຮັກສາ ແລະ ປົວແປງອາຄານສະຖານທີ່ຮ່ຳຮຽນ.
- ຊ່ວຍ ແລະ ເບິ່ງແຍງ ຄູອາຈານ ເພື່ອສ້າງເງື່ອນໄຂ ໃຫ້ເຂົາເຈົ້າສາມາດປະຕິບັດສຳເລັດໜ້າທີ່ຂອງຕົນ.

## ໝວດ ທີ III
## ການຈັດຕັ້ງ ແລະ ປະຕິບັດ ການປະຖົມສຶກສາ

<u>ມາດຕາ 10</u> : ການປະຖົມສຶກສາ ຈະຕ້ອງມີຫລັກສູດເປັນ ພາສາລາວ ແລະ ມີເນື້ອໃນດັ່ງນີ້ :

- ສ້າງເດັກນັກຮຽນໃຫ້ໄດ້ຕາມ 5 ທັດສະນະຂອງການສຶກສາເຊັ່ນ: ກາຍະສຶກສາ, ປັນຍາສຶກສາ, ຄຸນສົມບັດສຶກສາ, ສິລະປະສຶກສາ ແລະ ການສຶກສາອອກແຮງງານ.
- ສ້າງໃຫ້ເດັກນັກຮຽນ ຮູ້ມູນເຊື້ອຂອງຊາດ ແລະ ມູນເຊື້ອການປະຕິວັດ ມີຄວາມຮັກຊາດ ຮັກລະບອບໃຫມ່.
- ສ້າງເດັກນັກຮຽນໃຫ້ມີລະດັບຄວາມຮູ້, ຄວາມສາມາດພຽງພໍ ທີ່ຈະສືບຕໍ່ຮຽນຂັ້ນສູງຕໍ່ໄປ.
- ສ້າງເດັກນັກຮຽນໃຫ້ມີຄວາມສາມາດ, ຝຶກແອບການອອກແຮງງານ, ຄວາມຊຳນິຊຳນານ ຂັ້ນພື້ນຖານ ກ່ຽວກັບວິຊາຊີບທົ່ວໄປ ເພື່ອເປັນການປັບປຸງການດຳລົງຊີວິດໃນທ້ອງຖິ່ນທີ່ເຂົາອາໃສຢູ່ ຫລັງຈາກທີ່ເຂົາຈົບອອກຈາກໂຮງຮຽນໄປ.

ມາດຕາ 11: ການຈັດຕັ້ງ ການປະຖົມສຶກສາ ຕ້ອງຈັດສັນຕາໜ່າງ ໂຮງຮຽນປະຖົມ ຄືນໃຫມ່ ເພື່ອແນໃສ່ເຮັດໃຫ້ການຮັບເອົາເດັກ ເຂົ້າຮຽນໄດ້ເພີ່ມຂຶ້ນ ແລະ ສະດວກໃນການມາໂຮງຮຽນຂອງເຂົາເຈົ້າ. ພ້ອມດຽວກັນນັ້ນ, ກໍ່ຕ້ອງໄດ້ຈັດແບ່ງຕາຕະລາງ ເວລາຮໍ່າຮຽນ ໃຫ້ແທດເໝາະກັບສະພາບການຕົວຈິງ ໂດຍການຈັດສອນຫ້ອງຄວບ ຢູ່ເຂດພູດອຍຫ່າງໄກສອກຫລີກ, ບ່ອນທີ່ຈຳນວນເດັກມີອາຍຸ ເຂົ້າຮຽນນັ້ນມີໜ້ອຍ. ຈັດການສອນເຄິ່ງມື້ ຢູ່ເຂດຕົວເມືອງໃຫຍ່ ບ່ອນທີ່ຈຳນວນເດັກມີອາຍຸ ເຂົ້າຮຽນຫລາຍ ແລະ ຫ້ອງຮຽນມີຈຳກັດ, ບໍ່ພຽງພໍ.

ມາດຕາ 12: ການປະເມີນຜົນ ແລະ ການສອບເສັງ ເພື່ອຕີລາຄາການຮໍ່າຮຽນຂອງນັກຮຽນ ຕ້ອງປະຕິບັດຕາມການປະເມີນຜົນແບບຕໍ່ເນື່ອງ ແລະ ແບບລວມຜົນ ຄວບຄູ່ກັນໄປ, ເພື່ອໃຫ້ຄູໄດ້ມີໂອກາດຊຸກຍູ້ຊ່ວຍເຫລືອ ໃນການຮຽນຂອງນັກຮຽນໄດ້ຢ່າງຕໍ່ເນື່ອງ, ເປັນປົກກະຕິ, ບໍ່ເລັ່ງໃສ່ແຕ່ການສອບເສັງທ້າຍປີຮຽນ ທັງນີ້ ເພື່ອແນໃສ່ ຫລຸດຜ່ອນການຄ້າງຫ້ອງ ຊຶ່ງເປັນຕົ້ນເຫດຂອງການປະລະການຮຽນ.

ມາດຕາ 13: ສຳລັບເດັກພິການ ທີ່ມີຄວາມຕ້ອງການເຂົ້າຮັບການຮໍ່າຮຽນ ກໍຕ້ອງສ້າງເງື່ອນໄຂເຮັດໃຫ້ເຂົາເຈົ້າ ສາມາດໄດ້ເຂົ້າຮຽນ ໃນຫ້ອງຮຽນດຽວ ຮ່ວມກັບເດັກປົກກະຕິທຳມະດາ ໂດຍຈັດການ ບຳລຸງ ອົບຮົມເພີ່ມເຕີມ ແລະ ມີນະໂຍບາຍສະເພາະ ໃຫ້ແກ່ຄູທີ່ຮັບຜິດຊອບ.

## ໝວດ ທີ IV
## ບົດບັນຍັດສຸດທ້າຍ

ມາດຕາ 14: ມອບໃຫ້ກະຊວງສຶກສາທິການ ແລະ ອຳນາດການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເນື້ອໃນຈິດໃຈ ຂອງດຳລັດສະບັບນີ້.

ມາດຕາ 15: ສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງ ທຸກຂັ້ນ ມີໜ້າທີ່ໃນການຈັດຕັ້ງປະຕິບັດ ຕາມພາລະບົດບາດຂອງຕົນ.

ມາດຕາ 16: ດຳລັດ ສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ ທີ່ໄດ້ລົງລາຍເຊັນ ເປັນຕົ້ນໄປ.

ວຽງຈັນ, ວັນທີ ..19..../....7...../1996..

ນາຍົກ ລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ຄຳໄຕ ສີພັນດອນ